**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 2972 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2024

# ແຈ້ງການ

**ເຖິງ: ບັນດາຫົວໜ່ວຍທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນຂອບເຂດທົ່ວປະເທດ.**
**ເລື່ອງ: ການດັດສົມຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ.**

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2072/ອຄ, ລົງວັນທີ 15 ພະຈິກ 2023;
- ອີງໃສ່ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍ ຜັນຂະຫຍາຍທິດຊີ້ນຳຂອງກອງປະຊຸມກົມການເມືອງ ຮ່ວມກັບ ຄະນະເລຂາທິການສູນກາງພັກຕໍ່ກັບການດັດສົມບໍລິສັດນຳເຂົ້າ-ສົ່ງອອກ ສະບັບເລກທີ 1585/ຫສນຍ, ລົງວັນທີ 12 ສິງຫາ 2024.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ເພື່ອປະຕິບັດຕາມທິດຊີ້ນຳຂອງກົມການເມືອງສູນກາງພັກຕໍ່ກັບການດັດສົມຜູ້ນຳເຂົ້າ-ສົ່ງອອກສິນຄ້າ ໃຫ້ສາມາດຫຼຸດໄດ້ຕາມຄາດໝາຍ 20-25% ໃນທ້າຍປີ 2024, ຫັນໄປສູ່ການຂາຍຍົກ-ຂາຍຍ່ອຍ ແລະ ເຄື່ອນໄຫວຜ່ານລະບົບໃຫ້ຖືກຕ້ອງຕາມລະບຽບການ ໂດຍຈະໄດ້ດັດສົມຫົວໜ່ວຍທຸລະກິດບົນພື້ນຖານເງື່ອນໄຂ ດັ່ງລຸ່ມນີ້:

1. ວິສາຫະກິດທີ່ເຄື່ອນໄຫວໃນຮູບການ ວິສາຫະກິດສ່ວນບຸກຄົນ, ໝາຍວ່າຜູ້ທີ່ຈະດຳເນີນກິດຈະການນຳເຂົ້າ-ສົ່ງອອກ ຕ້ອງແມ່ນຮູບການ ວິສາຫະກິດຮຸ້ນສ່ວນ ຫຼື ບໍລິສັດ.
2. ວິສາຫະກິດ ທີ່ບໍ່ໄດ້ລົງທະບຽນເປັນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ຫຼື ບໍລິການ.
3. ວິສາຫະກິດ ທີ່ບໍ່ສຳເລັດການເປີດບັນຊີສະເພາະກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ຕາມທີ່ໄດ້ຮັບການຢັ້ງຢືນຈາກທະນາຄານແຫ່ງ ສປປ ລາວ ທີ່ເປີດກັບທະນາຄານທຸລະກິດ ຢູ່ ສປປ ລາວ.
4. ວິສາຫະກິດ ທີ່ບໍ່ໄດ້ຮັບໃບຢັ້ງຢືນເຂົ້າສູ່ລະບົບອາກອນມູນຄ່າເພີ່ມ.
5. ວິສາຫະກິດ ທີ່ບໍ່ມີການເຄື່ອນໄຫວນຳເຂົ້າ-ສົ່ງອອກໂຕຈິງ ໃນໄລຍະ 01 ປີ ນັບແຕ່ມື້ທີ່ໄດ້ລົງທະບຽນເປັນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ຫຼື ບໍລິການແລ້ວ, ລວມທັງບໍ່ປະຕິບັດພັນທະອາກອນ.
6. ວິສາຫະກິດ ທີ່ບໍ່ມີສາງສິນຄ້າ ທີ່ເປັນບ່ອນຮອງຮັບ ແລະ ກະຈາຍສິນຄ້າ, ຊຶ່ງສາງຕ້ອງມີລະບົບ ບັນທຶກຂໍ້ມູນສິນຄ້າ ເຂົ້າ-ອອກ.
7. ວິສາຫະກິດ ທີ່ດຳເນີນກິດຈະການນຳເຂົ້າ-ສົ່ງອອກ ທີ່ບໍ່ສອດຄ່ອງກັບກິດຈະການທີ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງກັບ ບັນຊີປະເພດທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດຕາມແຈ້ງການນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ປອ. ບົວວັນ ວິລະວົງ